**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 27-ກັນຍາ 2009 (09-27-2009)**

**<u>ຜົນຂອງການຮູ້ຈັກກັບພຣະເຢຊູ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ມາຣະໂກ 8:34-38; 9:33-37; 10:32-34)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ມາຣະໂກໄດ້ເວົ້າກ່ຽວກັບການຮູ້ຈັກ ແລະການຕິດຕາມພຣະເຢຊູມີຜົນການປ່ຽນແປງຫລາຍສິ່ງຫລາຍຢ່າງ, ເຊັ່ນ ຄວາມເຕັມໃຈໃນການປະຕິເສດຕົວເອງ, ແລະຍອມທົນທຸກທໍຣະມານເພື່ອພຣະອົງ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ມີບາງຄົນເຊື່ອວ່າການເຊື່ອໃນພຣະເຢຊູຄຣິດເຮັດໃຫ້ບໍ່ມີຊີວິດຊີວາ ແລະບໍ່ມີຄວາມສົດຊື່ນແຈ່ມໃສ. ຜູ້ນຳສາສນາ ບາງຄົນກໍໄດ້ສອນຫລັກການຢ່າງນີ້. ຄຣິສຕຽນໃນສມັຍນີ້ຕ້ອງຕໍ່ສູ້ກັບຄວາມກົດດັນຂອງທຳນຽມປັດຈຸບັນເພື່ອໃຫ້ ຊີວິດແຫ່ງຄວາມເຊື່ອປະສົບຜົນສຳເຣັດໃນມາຕະຖານຂອງໂລກ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ທ່ານຈະຖືກທ້າທາຍໃຫ້ສຳຣວດການຕັດສິນໃຈຂອງທ່ານຕໍ່ພຣະຄຣິດໂດຍການຮຽກເອີ້ນຂອງພຣະອົງ ໃຫ້ປະຕິເສດຕົວເອງ, ບໍຣິການນໂດຍບໍ່ເຫັນແກ່ຕົວ, ແລະມີຄວາມເຕັມໃຈຮັບຄວາມທຸກລຳບາກ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ບອກກັບນັກຮຽນວ່າ ໃນຍາມນີ້ມີຊຸມຊົນຈຳນວນຫລາຍໄດ້ກັງວົນສົນໃຈນຳເກມຟຸດບອນຂອງໂຮງຮຽນ ມັທຍົມ ໂຮງຮຽນວິທຍາລັຍ.
- ມີຫົວໜ້າກິລາໂຮງຮຽນວິທຍາລັຍຄົນນຶ່ງບອກຂ້າພະເຈົ້າວ່າລາວຈະເອົາມາຕະຖານຄວາມຄິດເຫັນຜູ້ທີ່ຫລິ້ນ ດ້ວຍໃຈທຸກມື້ໃຫ້ສູງກວ່າຊຸມຊົນທີ່ບໍ່ຫລິ້ນ.
- ໃຫ້ນັກຮຽນຕອບສນອງຕໍ່ຄຳບອກຂອງຫົວໜ້າກິລາ. ຜູ້ໃຫຍ່ທັງຫລາຍທີ່ເປັນຜູ້ຫລິ້ນຈະບໍ່ສາມາດຫລີກລ່ຽງ ຫລືເມີນເສີຍຕໍ່ການຕົກລົງຂອງລາວໄດ້ບໍ່ດົນ.

- ບັນດາຜູ້ທີ່ເຊື່ອຈະບໍ່ສາມາດຫລີກຈາກການຕິກລິ້ງຂອງເຂົາເຈົ້າຕໍ່ພຣະຄຣິດໄດ້ເໝືອນກັນ.
- ໃນບົດຮຽນນີ້ນີ້ຈະທົບທວນຄືນການທີ່ພວກເຮົາຮູ້ຈັກ ແລະການຕິດຕາມພຣະຄຣິດໃນການປ່ຽນແປງນັ້ນຄື, ເຕັມໃຈການປະຕິເສດຕົນເອງ, ການຮັບໃຊ້ຄົນອື່ນ, ແລະຄວາມທົນທຸກເພື່ອພຣະເຢຊູ.

1. **<u>ເຕັມໃຈປະຕິເສດຕົນເອງ:</u>** (ມາຣະໂກ 8:34-38)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 8:34-38 ໃຫ້ນັກຮຽນຟັງສຳລັບການກະທຳທັງສາມຢ່າງທີ່ພຣະເຢຊູບອກສາວົກໃຫ້ເຮັດເພື່ອຕິດຕາມພຣະອົງ. ໃຫ້ນັກຮຽນຈົດສິ່ງທີ່ພຣະເຢຊູບອກ ແລະບັນທຶກຄຳຕອບໃສ່ກະດານ ( ປະຕິເສດຕົນເອງ, ແບກໄມ້ກາງແຂນຂອງຕົນຕິດຕາມພຣະອົງ, ແລະຕາມເຮົາມາ) ນຳສົນທະນາວ່າ ເຮັດແນວໃດພວກເຮົາຈຶ່ງຈະສາມາດທຳຕາມຂໍ້ເຫລົ່ານີ້ໄດ້. ໃຫ້ເນັ້ນເຖິງການປະຕິເສດຕົນເອງ ເອົາພຣະເຈົ້າເປັນນຶ່ງເໜືອເຮົາເອງ.
- ໃຫ້ນັກຮຽນຜູ້ນຶ່ງແບ່ງປັນຕົວຢ່າງຊຶ່ງມີຜູ້ໃດຜູ້ນຶ່ງທີ່ໄດ້ຊ່ອຍຊີວິດຂອງລາວ.
- ສົນທະນາກັນເຣື່ອງການສັ່ງສອນຂອງພຣະເຢຊູຄຣິດເຣື່ອງການເປັນຄົນທີ່ອາຍພຣະອົງ ແລ້ວພຣະອົງຈະເຮັດແນວໃດຕອບ.
- ຂັ້ນຕອນໃດທີ່ພວກເຮົາຈະຕ້ອງເຮັດກ່ອນໃນອາທິນີ້ເພື່ອໃຫ້ແນ່ໃຈໃນສິ່ງທີ່ເປັນພື້ນຖານການສົນທະນາຂອງພວກເຮົາໃຫ້ເປັນທີ່ພໍພຣະທັຍພຣະເຈົ້າຫລາຍກວ່າສົນໃຈໃນການສົນໃຈໃນການເຮັດພື້ນຖານຂອງຄວາມເຫັນແກ່ຕົວ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ມາຣະໂກ 8:34-38)

1. ຜູ້ໃດທີ່ບໍ່ມີຄວາມເຫັນແກ່ຕົວທີ່ທ່ານສາມາດຍົກເອົາມາເລົ່າເປັນຕົວຢ່າງໄດ້?
2. ທ່ານຄິດວ່າການບອກໃຫ້ປະຕິເສດຕົນເອງ,ແບກໄມ້ກາງແຂນຂອງຕົນ ແລະຕິດຕາມພຣະເຢຊູນັ້ນເປັນຄຳສັ່ງທີ່ມີຄຸນຄ່າບໍ່?
3. ແມ່ນອັນໃດທີ່ເປັນຕົວຢ່າງໃນການໜ້າອາຍພຣະເຢຊູ? ແມ່ນອັນໃດທີ່ເປັນຕົວຢ່າງທີ່ບໍ່ໜ້າອາຍພຣະເຢຊູ?

2. **<u>ພ້ອມທີ່ຈະຮັບໃຊ້:</u>** (ມາຣະໂກ 9:33-37)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 9:33-37
- ການຫາສຽງທີ່ດີທີ່ສຸດເພື່ອຊຸມຊາດ, ແມ່ນພຣະຄຣິດຊົງຮຽກເອີ້ນໃຫ້ຜູ້ທີ່ເຊື່ອທັງຫລາຍຮັບໃຊ້ຊຶ່ງກັນແລະກັນທຸກມື້ທຸກວັນ.
- ຂໍໃຫ້ຜູ້ອາວຸໂສແບ່ງປັນສິ່ງເຂົາເຈົ້າມັກເຮັດ. ໃຫ້ຜູ້ນຶ່ງອາສາສມັກຈົດບັນທຶກບາງສິ່ງບາງຢ່າງທີ່ເຂົາເຈົ້າເລົ່າໃສ່ກະດານ ນຳເອົາມາສົນທະນາກັນວ່າ ຜູ້ທີ່ເຊື່ອທັງຫລາຍສາມາດແປສິ່ງຕ່າງໆທີ່ເຂົາເຈົ້າມັກເຮັດນັ້ນມາເປັນພາກປະຕິບັດໃນການຮັບໃຊ້. ກັບໄປບອກກັບຜູ້ອາວຸໂສອີກວ່າ ນີ້ເປັນວິທີທາງທີ່ງ່າຍນັ້ນກໍຄື ໃຫ້ຫາຮັບໃຊ້ໃນໂບດ ແລະຊຸມຊົນທັງຫລາຍ.
- ການຮັບໃຊ້ມີຫລາຍວິທີທາງ ຫລາຍຢ່າງຊຶ່ງບໍ່ພຽງແຕ່ພົບປະສ້າງສັນກັນ, ຕ້ອງການຊຶ່ງກັນແລະກັນເທົ່ານັ້ນແຕ່ຕ້ອງແນະນຳເຣື່ອງພຣະເຢຊູຄຣິດໃຫ້ເຂົາເຈົ້າພ້ອມ. ໜູນຈິດໜູນໃຈເຂົາເຈົ້າໃຫ້ອ່ານພຣະທັມຂອງພຣະເຈົ້າຢູ່ເຮືອນດ້ວຍ ແລະໃຫ້ເຂົາເຈົ້າປະຕິບັດ ຕິດຕາມພຣະຄຣິດດ້ວນຕົວເຂົາເຈົ້າເອງ ແລະບອກເຖິງເຣືອງ "ຈະເປັນຄຣິສຕຽນໄດ້ແນວໃດໃນຂນະທີ່ເຂົາເຈົ້າຍັງມີການຮັບໃຊ້ສິ່ງອື່ນໆຢູ່ "(ໜ້າທີ່ອື່ນໃນໂບດ)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 9:33-37

1. ທ່ານໄດ້ພົບໜ້າທີ່ການຮັບໃຊ້ບ່ອນໃດ, ອັນໃດທີ່ມີຄວາມຊື່ນຊົມຍິນດີ?
2. ຖ້າຫາກພວກອັຄສາວົກຫາມີຄວາມບໍ່ແນ່ໃຈເຣື່ອງທີ່ດີທີ່ສຸດ, ແລ້ວໃນສັງຄົມຂອງພວກເຮົາຈະເບິ່ງ ຫລືມອງວາດພາບໄປແນວໃດ?
3. ທ່ານຈະໜູນໃຈຜູ້ໃດຜູ້ນຶ່ງທີ່ຮັບໃຊ້ຜູ້ອື່ນແຕ່ຄົນນັ້ນອາດບໍ່ເຫັນຄວາມດີຢ່າງພິເສດແນວໃດ?

3 . **ຕຽມຕົວຮັບເອົາຄວາມລຳບາກ:** (ມາຣະໂກ 10:32-34)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາຣະໂກ 10:32-34
- ບອກໃຫ້ຜູ້ອາວຸໂສທັງຫລາຍຮູ້ວ່າແມ່ນເຂົາເຈົ້າຜູ້ນຶ່ງທີ່ເປັນອັຄສາວົກ. ຄຳຖາມປະເພດໃດທີ່ທ່ານຄິດວ່າຫລັງຈາກເຂົາເຈົ້າໄດ້ຍິນແລ້ວຈະເຂົາເຖິງມັນສມອງຂອງເຂົາເຈົ້າໄດ້?
- ຫລາຍຄົນໃນພວກເຮົາຈະບໍ່ຖືກຮຽກເອີ້ນໃຫ້ເຂົ້າມາຮັບໃຊ້ພຣະຄຣິດໂດຍສ່ຽງຕໍ່ອັນຕະລາຍ, ແຕ່ພວກເຮົາຕ້ອງທຳຕາມນ້ຳພຣະທັຍຂອງພຣະອົງ.
- ເພງສັຣເສີນທີ່ມີຊື່ວ່າ "ບ່ອນໃດກໍຕາມຖ້າພຣະອົງນຳພາຂ້ານ້ອຍກໍຈະໄປ" ຊຶ່ງເປັນການຍອມຮັບທີ່ດີ. ກ່ຽວກັບບົດເພງນັ້ນເມື່ອມາສລຸບແລ້ວທັງໝົດເປັນການອຸທິດຕົນຕິດຕາມພຣະເຢຊູຄຣິດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 10:32-34

1. ທ່ານຈະຍອມທົນທຸກທໍຣະມານເພື່ອພຣະຄຣິດຫລາຍປານໃດ?
2. ທ່ານຈະສາມາດຈ້ອງມອງເບິ່ງການທົນທຸກທໍຣະມານຂອງຜູ້ທີ່ທ່ານຮັກທີ່ສຸດທົນທຸກທໍຣະມານເພື່ອພຣະເຢຊູຄຣິດໄດ້ດົນຂນາດໃດ?
3. ມີບາງວິທີທາງທີ່ຊ່ອຍຜູ້ທີ່ເຊື່ອທັງຫລາຍທຳລາຍຄວາມທຸກທໍຣະມານ ໃຫ້ຫັນມາຈົດຈໍ່ໃສ່ຄວາມຫວັງໃນອະນາຄົດທີ່ເຂົາເຈົ້າມີໃນພຣະເຢຊູຄຣິດນັ້ນແມ່ນທາງໃດ?

## ພຣະຄັມພີແຫ່ງຄວາມຈິງ

- ພຣະເຢຊູເອີ້ນພວກເຮົາໃຫ້ມີຄວາມສັມພັນກັບພຣະອົງ.
- ໃນຄວາມສັມພັນອັນນັ້ນ, ພວກເຮົາສົມຄວນຈະປະຕິເສດຕົວເອງ ແລະແບກໄມ້ກາງແຂນຂອງຕົນເອງ.
- ເຊັ່ນດຽວກັນພວກເຮົາຕ້ອງເປັນຄົນທີ່ພ້ອມທີ່ຈະເປັນຜູ້ຮັບໃຊ້ຊຶ່ງກັນແລະກັນຫລາຍກວ່າເປັນຄົນທີ່ໃຊ້.
- ການຕິດຕາມພຣະຄຣິດຈະມີຄວາມຫຍຸ້ງຍາກຊຶ່ງລວມໄປເຖິງການຈັດຕຽມເພື່ອໃຫ້ຍອມຮັບການທຸກທໍຣະມານໄດ້ ແລະດ້ວຍຄວາມເຕັມໃຈ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**